ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ                                                                                    ເລກທີ 108 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ສິງຫາ 2022

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍວິຈິດສິນ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 51/ສພຊ, ລົງວັນທີ 07 ກໍລະກົດ 2022 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍວິຈິດສິນ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 07/ຄປຈ, ລົງວັນທີ 05 ສິງຫາ 2022.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍວິຈິດສິນ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 51 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 07 / 22

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍວິຈິດສິນ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍວິຈິດສິນ ໃນວາລະຂອງກອງປະຊຸມ ຄັ້ງວັນທີ 4 ກໍລະກົດ 2022 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງວັນທີ 7 ກໍລະກົດ 2022.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍວິຈິດສິນ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 19 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

# ກົດໝາຍ
# ວ່າດ້ວຍວິຈິດສິນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການຕິດຕາມ ກວດກາ ການເຄື່ອນໄຫວວຽກງານວິຈິດສິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນໄປຢ່າງຖືກຕ້ອງ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ສົ່ງເສີມຫົວຄິດປະດິດສ້າງ ໃນການສ້າງ, ປົກປັກຮັກສາ, ຟື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ຜົນງານ ດ້ານວິຈິດສິນ, ຮັກສາເອກະລັກ, ພູມປັນຍາ, ມູນເຊື້ອທາງດ້ານວັດທະນະທຳອັນດີງາມຂອງຊາດ ໃຫ້ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ວິຈິດສິນ**

ວິຈິດສິນ ແມ່ນ ຜົນງານສິລະປະ ທີ່ມະນຸດສ້າງຂຶ້ນ ຈາກຄຸນຄ່າອັນລວມຍອດ ດ້ວຍພູມປັນຍາ, ພອນສະຫວັນ, ອາລົມຈິດບວກກັບສີມືອັນປານີດ ເພື່ອຄວາມງົດງາມ, ຄວາມເອກອ້າງທະນົງໃຈ ຊຶ່ງມີຄຸນຄ່າທາງດ້ານຈິດໃຈໂດຍບໍ່ສິ້ນສຸດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ອະນຸສາວະລີ ໝາຍເຖິງ ຜົນງານປະຕິມາກຳ ແລະ ສະຖາປັດຕະຍະກຳ ທີ່ສ້າງຂຶ້ນໄວ້ເປັນທີ່ລະນຶກເຖິງຄຸນງາມຄວາມດີຂອງບຸກຄົນ, ເຫດການສຳຄັນທາງດ້ານປະຫວັດສາດຂອງຊາດ ເປັນຕົ້ນ ຮູບປັ້ນຜູ້ນຳ, ວິລະບຸລຸດ, ວິລະຊົນ, ທາດນັກຮົບນິລະນາມ, ສະຖານທີ່ປະຫວັດສາດ;

2. ການອະນຸລັກຜົນງານດ້ານວິຈິດສິນ ໝາຍເຖິງ ການຮັກສາໄວ້ຊຶ່ງຄຸນຄ່າທາງສິລະປະດ້ານວັດທະນະທຳ, ປະຫວັດສາດ ເພື່ອບໍ່ໃຫ້ເຊື່ອມໂຊມ ແລະ ສູນຫາຍໄປຕາມການເວລາ;

3. **ການກ່າຍ ຫຼື ລອກແບບ ຜົນງານດ້ານວິຈິດສິນ** ໝາຍເຖິງ ການສ້າງຂຶ້ນໃໝ່ໂດຍ ກ່າຍເອົາແບບເກົ່າ, ສີສັນ, ລວດລາຍ, ຮູບຮ່າງລັກສະນະວັດຖຸ ຫຼື ຮູບແບບດັ່ງເດີມ;

4. **ຂະມຸ** ໝາຍເຖິງ ວັດສະດຸ ທີ່ເຮັດດ້ວຍ ຂີ້ເຖົ່າກົກໂພ ຫຼື ຂີ້ເຖົ່າອື່ນ, ນ້ຳກ້ຽງ, ຢາງບົງ ສຳລັບ ຫຼໍ່ລວດລາຍປະດັບ ໃສ່ ຕູ້, ພຣະພຸດທະຮູບ, ທຳທຳມາດ, ກະໂຈມ, ຫົວໂຂນ ແລະ ອື່ນໆ;

5. **ສິລະປິນອາຊີບ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວວຽກງານວິຈິດສິນ ເປັນອາຊີບຕົ້ນຕໍ ເຊັ່ນ ການແຕ້ມ, ການປັ້ນ, ການຄວັດ, ການອອກແບບງານສິນ ແລະ ຫັດຖະກຳສິນ;

6. **ສິລະປິນເຄິ່ງອາຊີບ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ເຄື່ອນໄຫວວຽກງານວິຈິດສິນ ເປັນອາຊີບສຳຮອງ ຄຽງຄູ່ກັບອາຊີບອື່ນ;

7. **ສິລະປິນສະໝັກຫຼິ້ນ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທີ່ມີຄວາມມັກທາງດ້ານວິຈິດສິນ ໂດຍບໍ່ໄດ້ຜ່ານການຮຽນ ແຕ່ຫາກໄດ້ເຄື່ອນໄຫວເປັນບາງຄັ້ງຄາວ, ບາງໄລຍະ ຕາມກາລະໂອກາດ ແລະ ເງື່ອນໄຂ;

8. **ປູນປຣາສເຕີ** ໝາຍເຖິງ ປູນຂາວສຳລັບຫຼໍ່ແບບ, ປັ້ນແບບ ທີ່ມີຄຸນສົມບັດທີ່ແຂງໄຕໄວ;

9. **ສີອະຄຣີລິກ (ACRYLIC)** ໝາຍເຖິງ ສີນ້ຳສຳລັບໃຊ້ໃນການແຕ້ມຮູບທຸກຊະນິດ ຊຶ່ງມີຄຸນນະພາບດີກວ່າສີນ້ຳ ແລະ ສີໂປສເຕີ;

10. **ສີໂປສເຕີ** ໝາຍເຖິງ ສີນ້ຳສຳລັບໃຊ້ໃນການແຕ້ມຮູບທຸກຊະນິດ ຊຶ່ງບໍ່ສາມາດກັນນ້ຳໄດ້;

11. **ສາສະນະສະຖານ** ໝາຍເຖິງ ສະຖານທີ່ທາງດ້ານສາສະໜາ ເຊັ່ນ ວັດ, ສິມ, ກຸດຕິ, ຫໍແຈກ, ຫໍໄຕ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍຫຼັກເມືອງ, ທຳມະສະພາ ແລະ ບ່ອນສັກກາລະບູຊາອື່ນ;

12. **ສະກຸນຊ່າງວິຈິດສິນ** ໝາຍເຖິງ ບຸກຄົນ ທີ່ເປັນນາຍຊ່າງສະເພາະດ້ານວິຈິດສິນ ສາຂາຕ່າງໆ ເປັນຕົ້ນ ຊ່າງປັ້ນ, ແຕ້ມ, ຄວັດ, ຕິດມຸກ, ຕິດຄຳປົວ ແລະ ສິລະປະໂລຫະ;

13. **ສິລະປະ** ໝາຍເຖິງ ການສ້າງສັນຜົນງານດ້ານວິຈິດສິນ ດ້ວຍພູມປັນຍາ, ພອນສະຫວັນ, ອາລົມຈິດບວກກັບສີມືອັນປານີດ ເປັນຕົ້ນ ການແຕ້ມ, ຄວັດ, ປັ້ນ, ຫຼໍ່.

## ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານວິຈິດສິນ

ລັດ ສົ່ງເສີມ ແລະ ໃຫ້ຄວາມສຳຄັນ ວຽກງານວິຈິດສິນ ໃຫ້ມີການຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ ດ້ວຍການສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ສະໜອງ ງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ.

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂ ອຳນວຍຄວາມສະດວກໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນ ການຄົ້ນຄວ້າ ວິໄຈ, ການປະດິດສ້າງ, ການພັດທະນາຜົນງານ, ການເຜີຍແຜ່ຄຸນຄ່າ ແລະ ອະນຸລັກ ຜົນງານດ້ານວິຈິດສິນທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ພ້ອມທັງຊຸກຍູ້ ແລະ ສົ່ງເສີມ ໃຫ້ສ້າງສະຖານການສຶກສາ, ສ້າງວິຊາຊີບ ແລະ ຜະລິດຕະພັນວິຈິດສິນ ໃຫ້ມີຄວາມອຸດົມຮັ່ງມີ, ຫຼາຍຮູບ ຫຼາຍສີ ແລະ ເປັນສິນຄ້າ.

ລັດ ຮັບຮູ້ ແລະ ປົກປ້ອງກຳມະສິດ, ລິຂະສິດ ກ່ຽວກັບຜົນງານດ້ານວິຈິດສິນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງ ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້ຜົນງານ ດ້ານວິຈິດສິນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານວິຈິດສິນ**

ການເຄື່ອນໄຫວວຽກງານວິຈິດສິນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

2. ຮັບປະກັນ ລັກສະນະຊາດ, ມະຫາຊົນ, ກ້າວໜ້າ, ວິທະຍາສາດ ແລະ ທັນສະໄໝ;

3. ຮັບປະກັນ ລັກສະນະເຄົ້າເດີມ, ປົກປັກຮັກສາ, ຟື້ນຟູ, ອະນຸລັກ ແລະ ເສີມຂະຫຍາຍຄຸນຄ່າຂອງຜົນງານດ້ານວິຈິດສິນ;

4. ຮັບປະກັນຄວາມຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

5. ຮັບປະກັນການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງການມີສ່ວນຮ່ວມຂອງມະຫາຊົນ.

**ມາດຕາ 6 ສິດ ແລະ ພັນທະ ຂອງພົນລະເມືອງກ່ຽວກັບວຽກງານວິຈິດສິນ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສ ຢູ່ ສປປ ລາວ ມີສິດໃນການເຄື່ອນໄຫວ ແລະ ການຄົ້ນຄວ້າສ້າງ ຜົນງານດ້ານວິຈິດສິນ ແລະ ປະກອບກິດຈະການ, ປະກອບຄຳເຫັນ ຕໍ່ຜົນງານ, ຜະລິດຕະພັນສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສ ຫຼື ເຄື່ອນໄຫວ ຢູ່ ສປປ ລາວ ລ້ວນແຕ່ມີພັນທະໃນການປົກປັກຮັກສາ, ອະນຸລັກ ຜົນງານດ້ານວິຈິດສິນທີ່ມີຄຸນຄ່າຂອງຊາດ ແລະ ຂອງທ້ອງຖິ່ນ.

ຄົນລາວຢູ່ຕ່າງປະເທດ ກໍສາມາດປະກອບສ່ວນເຂົ້າໃນການ ປົກປັກຮັກສາ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ ຜົນງານດ້ານວິຈິດສິນຂອງຊາດ ແລະ ຂອງທ້ອງຖິ່ນ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານວິຈິດສິນ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບວຽກງານວິຈິດສິນ ລວມທັງການສ້າງກິດຈະກຳຮ່ວມກັນ, ການຝຶກອົບຮົມ, ການເຜີຍແຜ່ ແລະ ການວາງສະແດງຜົນງານດ້ານວິຈິດສິນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ ແລະ ປະສິດທິພາບ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ພາກທີ II

# ປະເພດ, ລັກສະນະ ແລະ ລະດັບ ຂອງວິຈິດສິນ

## ໝວດທີ 1

## ປະເພດຂອງວິຈິດສິນ

**ມາດຕາ 9 ປະເພດຂອງວິຈິດສິນ**

ວິຈິດສິນ ມີ ຫົກປະເພດ ດັ່ງນີ້:

1. ຈິດຕະກຳ;
2. ປະຕິມາກຳ;
3. ສິລະປະພາບພິມ;
4. ນິເທດສິນ;
5. ສະຖາປັດຕະຍະກຳສິນ;
6. ຫັດຖະກຳສິນ.

**ມາດຕາ 10 ຈິດຕະກຳ**

ຈິດຕະກຳ ແມ່ນ ການແຕ້ມດ້ວຍ ສໍ, ສີນ້ຳ, ສີນ້ຳມັນ, ສີໂປສເຕີ, ສີອະຄຣີລິກ, ສໍຖ່ານຄາບອນ ແລະ ການແຕ້ມດ້ວຍວັດຖຸອື່ນ ລົງໃສ່ວັດສະດຸ ເຊັ່ນ ເຈ້ຍ, ໄມ້ອັດ, ຜ້າແພ, ຝາ ຫຼື ວັດສະດຸອື່ນ ໃຫ້ອອກມາເປັນ ຜົນງານ ທີ່ເປັນຮູບແຕ້ມ ທີ່ມີຫຼາຍ ລັກສະນະ, ຮູບແບບ ແລະ ເນື້ອໃນ ເປັນຕົ້ນ ຮູບເໝືອນຄົນ, ຮູບສັດ, ຮູບທຳມະຊາດ, ຮູບຊີວິດປະຈຳວັນ, ຮູບປະກອບເລື່ອງ, ຮູບສິ່ງວັດຖຸ.

**ມາດຕາ 11 ປະຕິມາກຳ**

ປະຕິມາກຳ ແມ່ນ ການປັ້ນ, ການແກະສະຫຼັກ, ການຫຼໍ່ ຂີ້ເຜີ້ງ, ສະບູ, ໄມ້, ຫີນ, ປູນປຣາສເຕີ, ໂລຫະ ແລະ ວັດສະດຸອື່ນ ໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 12 ສິລະປະພາບພິມ**

ສິລະປະພາບພິມ ແມ່ນ ຮູບພາບທີ່ໄດ້ຈາກການສ້າງແມ່ພິມ ເພື່ອພິມດ້ວຍ ນ້ຳມຶກ, ສີໂປສເຕີ, ສີ ອະຄຣີລິກ ແລະ ສີອື່ນ ລົງໃສ່ ເຈ້ຍ, ວັດສະດຸ ຫຼື ໂລຫະອື່ນ ໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

**ມາດຕາ 13 ນິເທດສິນ**

ນິເທດສິນ ແມ່ນ ຜະລິດຕະພັນສິນທີ່ໄດ້ຈາກ ການອອກແບບງານສິນ ເພື່ອໂຄສະນາ ເຜີຍແຜ່ ໂດຍ ຜ່ານພາຫະນະສື່ມວນຊົນ ກ່ຽວກັບຜະລິດຕະພັນ, ສິນຄ້າ, ວັດຖຸ ແລະ ເຄື່ອງຂອງ ເປັນຕົ້ນ ການອອກແບບ ຜະລິດຕະພັນ, ການອອກແບບສື່ສິ່ງພິມ, ການອອກແບບສື່ໂຄສະນາ, ການອອກແບບສື່ເອເລັກໂຕຣນິກ.

ມາດຕາ 14 ສະຖາປັດຕະຍະກຳສິນ

ສະຖາປັດຕະຍະກຳສິນ ແມ່ນ ສິ່ງກໍ່ສ້າງແຫ່ງສິລະປະ ທີ່ມີຮູບຊົງ, ການຕົບແຕ່ງ ພາຍໃນ ແລະ ພາຍນອກ ດ້ວຍລວດລາຍສິລະປະທີ່ ປານີດ, ໂດດເດັ່ນ ທາງດ້ານວັດທະນະທຳ ແລະ ປະຫວັດສາດ ເປັນຕົ້ນ ລວດລາຍສິລະປະຂອງ ອາຄານ, ເຮືອນພັກອາໄສ, ສິມ, ກຸດຕິ, ຫໍແຈກ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍ ຫຼັກເມືອງ.

ມາດຕາ 15 ຫັດຖະກຳສິນ

ຫັດຖະກຳສິນ ແມ່ນ ຜະລິດຕະພັນຫັດຖະກຳ ທີ່ມີສິລະປະ ທີ່ເປັນເອກະລັກສະເພາະ ເປັນຕົ້ນ ເຄື່ອງຕົບແຕ່ງ, ເຄື່ອງປະດັບ, ເຄື່ອງເອ້, ເຄື່ອງໃຊ້ສອຍ, ເຄື່ອງນຸ່ງຫົ່ມ, ເຄື່ອງຈັກສານ.

## ໝວດທີ 2
## ລັກສະນະຂອງວິຈິດສິນ

ມາດຕາ 16 ລັກສະນະຂອງວິຈິດສິນ

ວິຈິດສິນ ມີ ສາມລັກສະນະ ດັ່ງນີ້:

1. ວິຈິດສິນພື້ນເມືອງ;
2. ວິຈິດສິນຮ່ວມສະໄໝ;
3. ວິຈິດສິນແບບສ້າງສັນ.

ມາດຕາ 17 ວິຈິດສິນພື້ນເມືອງ

ວິຈິດສິນພື້ນເມືອງ ແມ່ນ ຜົນງານດ້ານວິຈິດສິນທີ່ມີເອກະລັກ ທາງດ້ານສິລະປະ, ວັດທະນະທຳ ແລະ ປະຫວັດສາດ ທີ່ເປັນຕົ້ນແບບດັ້ງເດີມກ່ຽວກັບ ນິທານພື້ນບ້ານ, ພຸດທະປະຫວັດ ແລະ ອື່ນໆ ດ້ວຍ ການແຕ້ມ ລວດລາຍລາວ, ການແຕ້ມຝາພະໜັງ, ການຕິດແກ້ວ, ຟອກຄຳປິວ, ຟອກສີເງິນ, ຟອກສີຄຳ, ການປັ້ນ, ຫຼໍ່, ຄວັດ, ເຄື່ອງປັ້ນດິນເຜົາ ທີ່ເຮັດດ້ວຍ ດິນ, ປູນ, ພະທາຍເພັດ, ຂະມຸ, ໄມ້, ທອງສຳລິດ, ການສ້າງຜົນງານ ຫັດຖະກຳສິນ ທີ່ເປັນເອກະລັກແຕ່ລະທ້ອງຖິ່ນດ້ວຍການຕີ ເງິນ, ທອງ, ຄຳ.

ມາດຕາ 18 ວິຈິດສິນຮ່ວມສະໄໝ

ວິຈິດສິນຮ່ວມສະໄໝ ແມ່ນ ຜົນງານດ້ານວິຈິດສິນທີ່ມີເອກະລັກຂອງຊາດ, ມີການປະສົມປະສານ ລະຫວ່າງ ອັນໃໝ່ ແລະ ອັນເກົ່າ ຊຶ່ງມີລັກສະນະກ້າວໜ້າ ທີ່ຮັບໃຊ້ສັງຄົມໃນປັດຈຸບັນ ເພື່ອໃຫ້ສອດຄ່ອງກັບ ວິວັດທະນາການຂອງສັງຄົມ ແລະ ການພັດທະນາປະເທດຊາດ ດ້ວຍ ການປັ້ນ, ການຫຼໍ່ ອະນຸສາວະລີບັນພະບຸ ລຸດ, ບຸກຄົນສຳຄັນທາງປະຫວັດສາດ; ການແຕ້ມ, ການພິມ, ການຄວັດແກະສະຫຼັກ ຫຼື ການກໍ່ສ້າງ ດ້ວຍວັດ ສະດຸ, ໂລຫະຕ່າງໆ.

ມາດຕາ 19 ວິຈິດສິນແບບສ້າງສັນ

ວິຈິດສິນແບບສ້າງສັນ ແມ່ນ ຜົນງານດ້ານວິຈິດສິນທີ່ມີການປະດິດສ້າງ ໃຫ້ມີຄວາມແປກໃໝ່ ໂດຍ ມີການປະສົມປະສານດ້ານສິລະປະ ເປັນຕົ້ນ ການແຕ້ມ, ການຄວັດແກະສະຫຼັກ, ການປັ້ນ, ການຫຼໍ່, ການພິມ ໃຫ້ທັນຍຸກສະໄໝ ມີລັກສະນະກ້າວໜ້າ ແລະ ສາກົນ ຫຼາຍຂຶ້ນ.

## ໝວດທີ 3
## ລະດັບຂອງວິຈິດສິນ

**ມາດຕາ 20 ລະດັບຂອງວິຈິດສິນ**

ວິຈິດສິນ ມີ ສອງລະດັບ ດັ່ງນີ້:

1. ວິຈິດສິນລະດັບທ້ອງຖິ່ນ;
2. ວິຈິດສິນລະດັບຊາດ.

ສຳລັບ ເງື່ອນໄຂ, ມາດຕະຖານ ແລະ ຂັ້ນຕອນ ການຈັດລະດັບຂອງວິຈິດສິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 21 ວິຈິດສິນລະດັບທ້ອງຖິ່ນ**

ວິຈິດສິນລະດັບທ້ອງຖິ່ນ ແມ່ນ ຜົນງານດ້ານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ລະດັບທ້ອງຖິ່ນ ທາງດ້ານວັດທະນະທຳ, ປະຫວັດສາດ ຊຶ່ງສ້າງຂຶ້ນ, ຕັ້ງຢູ່ ຫຼື ເກັບຮັກສາໄວ້ໃນພື້ນທີ່ຂອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຂຶ້ນທະບຽນເປັນວິຈິດສິນລະດັບທ້ອງຖິ່ນ.

**ມາດຕາ 22 ວິຈິດສິນລະດັບຊາດ**

ວິຈິດສິນລະດັບຊາດ ແມ່ນ ຜົນງານດ້ານວິຈິດສິນທີ່ມີເອກະລັກ, ຄຸນຄ່າສູງ, ລວດລາຍສິລະປະອັນປານີດ, ໂດດເດັ່ນ ແລະ ຫາຍາກ ລະດັບຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ຊຶ່ງສ້າງຂຶ້ນ, ຕັ້ງຢູ່ ຫຼື ເກັບຮັກສາໄວ້ ໃນພື້ນທີ່ໃດໜຶ່ງຂອງ ສປປ ລາວ ທີ່ໄດ້ຂຶ້ນທະບຽນເປັນວິຈິດສິນລະດັບຊາດ.

## ພາກທີ III
## ການສ້າງຜົນງານດ້ານວິຈິດສິນ ແລະ ວິຈິດສິນທີ່ເປັນສົມບັດມິ່ງເມືອງ

**ມາດຕາ 23 ການສ້າງຜົນງານດ້ານວິຈິດສິນ**

ການສ້າງຜົນງານດ້ານວິຈິດສິນ ແມ່ນ ການສ້າງຜົນງານສິລະປະ ທີ່ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ ບົນພື້ນຖານຫົວຄິດປະດິດສ້າງຂອງຜູ້ສ້າງ ທີ່ອອກມາຈາກ ອາລົມຈິດ, ປະສົບການ, ການບັນທຶກເຫດການ, ຄວາມຮູ້ສຶກ ທີ່ສະທ້ອນເຖິງສັງຄົມ, ຄວາມເຊື່ອ ແລະ ວິຖີການດຳລົງຊີວິດ ທີ່ບໍ່ຂັດກັບແນວທາງນະໂຍບາຍ, ກົດໝາຍ, ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງປະຊາຊົນລາວບັນດາເຜົ່າ.

**ມາດຕາ 24 ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ**

ການແຂ່ງຂັນສ້າງຜົນງານດ້ານວິຈິດສິນ ແມ່ນ ການຊຸກຍູ້ ແລະ ສົ່ງເສີມ ຫົວຄິດປະດິດສ້າງ, ພອນສະຫວັນຂອງບຸກຄົນ ທີ່ເປັນນັກວິຈິດສິນ ອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ ເພື່ອເຮັດໃຫ້ຜົນງານດ້ານວິຈິດສິນ ອຸດົມຮັ່ງມີ, ມີຫຼາຍສີສັນ ແລະ ຍືນຍົງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈັດຕັ້ງແຂ່ງຂັນຜົນງານດ້ານວິຈິດສິນ ຕ້ອງປະຕິບັດຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ເປົ້າໝາຍການແຂ່ງຂັນຜົນງານດ້ານວິຈິດສິນ.

ມາດຕາ 25 ເປົ້າໝາຍການແຂ່ງຂັນຜົນງານດ້ານວິຈິດສິນ

ການແຂ່ງຂັນຜົນງານດ້ານວິຈິດສິນ ມີເປົ້າໝາຍ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມຫົວຄິດປະດິດສ້າງ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນການສ້າງຜົນງານດ້ານວິຈິດສິນ ໃຫ້ມີຫຼາຍສີສັນ, ມີລັກສະນະຊາດ, ມະຫາຊົນ ແລະ ກ້າວໜ້າ;

2. ອະນຸລັກຮັກສາ ເອກະລັກ, ມູນເຊື້ອ ທາງດ້ານວັດທະນະທຳ ຂອງຊາດ ແລະ ເຜົ່າ ໃຫ້ຍືນຍົງ;

3. ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນການຟື້ນຟູ, ອະນຸລັກ, ພັດທະນາ ແລະ ຊົມໃຊ້ ຜົນງານດ້ານວິຈິດສິນ ໃຫ້ເທົ່າທຽມກັບພາກພື້ນ ແລະ ສາກົນ.

ມາດຕາ 26 ວິຈິດສິນທີ່ເປັນສົມບັດມິ່ງເມືອງ

ວິຈິດສິນທີ່ເປັນສົມບັດມິ່ງເມືອງ ແມ່ນ ຜົນງານດ້ານວິຈິດສິນ ຊຶ່ງມີຄຸນຄ່າອັນໂດດເດັ່ນ, ພິເສດ ທີ່ຫາຍາກ ເປັນເອກະລັກຂອງຊາດ, ເປັນທີ່ສັກກາລະບູຊາ, ຄູ່ບ້ານຄູ່ເມືອງ ແລະ ເຊີດຊູຈິດໃຈຮັກຊາດ ແລະ ບ້ານເກີດເມືອງນອນ ເປັນຕົ້ນ ລວດລາຍສິລະປະຂອງ ອະນຸສາວະລີວິລະບູລຸດ, ສາສະນະສະຖານ, ພຣະພຸດທະຮູບ ເຊັ່ນ ພຣະທາດຫຼວງ, ວັດສີສະເກດ, ຫໍພຣະແກ້ວ, ວັດຊຽງທອງ, ວັດພູຈຳປາສັກ, ໄຫຫີນຊຽງຂວາງ.

## ພາກທີ IV

## ການຄຸ້ມຄອງ, ການປົກປັກຮັກສາ, ການອະນຸລັກ ວິຈິດສິນ

### ໝວດທີ 1

### ການຄຸ້ມຄອງວິຈິດສິນ

ມາດຕາ 27 ການຄຸ້ມຄອງ

ລັດ ຄຸ້ມຄອງວິຈິດສິນ ຢ່າງ ລວມສູນ ແລະ ເປັນລະບົບໃນຂອບເຂດທົ່ວປະເທດ ເພື່ອໃຫ້ຜົນງານດ້ານວິຈິດສິນ ໄດ້ຮັບການປົກປ້ອງ ຕາມກົດໝາຍ.

ການຄຸ້ມຄອງວິຈິດສິນ ດຳເນີນດ້ວຍ ການຂຶ້ນທະບຽນ, ການຈຳລອງແບບ, ການສ້າງໃໝ່, ການຄົ້ນຄວ້າ, ວິໄຈ, ການສົ່ງອອກ ເພື່ອການວິໄຈ ແລະ ການວາງສະແດງ, ການນຳເຂົ້າ, ການໂຄສະນາ ການເຜີຍແຜ່ ຫຼື ຈຳໜ່າຍ, ການໂອນ, ການຊື້ ຂາຍ, ການເຊົ່າ ແລະ ການສືບທອດ.

ກຳມະສິດ ແລະ ລິຂະສິດ ຕໍ່ວິຈິດສິນທີ່ເປັນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢູ່ພາຍໃນປະເທດ ໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງຈາກລັດ ຕາມກົດໝາຍ.

ມາດຕາ 28 ການຂຶ້ນທະບຽນ

ຜົນງານດ້ານວິຈິດສິນ ທີ່ຢູ່ໃນການຄອບຄອງຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດຂຶ້ນທະບຽນນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດຳເນີນການຊອກຄົ້ນ, ເກັບກຳຜົນງານດ້ານວິຈິດສິນປະເພດຕ່າງໆ ເພື່ອປະເມີນຄຸນຄ່າ, ຈັດລະດັບ ແລະ ຂຶ້ນທະບຽນ ພ້ອມກັນນັ້ນ ກໍຊຸກຍູ້ໃຫ້ຜູ້ຄອບຄອງຜົນງານດ້ານວິຈິດສິນ ສະເໜີຂຶ້ນທະບຽນ ຊຶ່ງພາຍຫຼັງໄດ້ຂຶ້ນທະບຽນແລ້ວ ຜົນງານດັ່ງກ່າວຖືກຮັບຮອງ ເປັນຜົນງານທີ່ຕ້ອງໄດ້ຮັບການປົກປ້ອງ, ປົກປັກຮັກສາ ແລະ ອະນຸລັກໃຫ້ຍືນຍົງ.

ຜົນງານດ້ານວິຈິດສິນ ທີ່ຢູ່ໃນການຄອບຄອງຂອງສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຜົນງານດ້ານວິຈິດສິນ ທີ່ເປັນສົມບັດມິ່ງເມືອງ ໃຫ້ຂຶ້ນທະບຽນນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພາຍຫຼັງຂຶ້ນທະບຽນແລ້ວ ຜົນງານດັ່ງກ່າວຖືກຮັບຮູ້ ເປັນຜົນງານດ້ານວິຈິດສິນລະດັບຊາດ ພ້ອມທັງຮັບຮູ້ສິດຄອບຄອງ.

ການຂຶ້ນທະບຽນ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງຂໍຂຶ້ນທະບຽນ;
2. ການພິຈາລະນາການຂຶ້ນທະບຽນ;
3. ການເກັບຮັກສາເອກະສານຂຶ້ນທະບຽນ;
4. ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ.

**ມາດຕາ 29 ການຍື່ນຄຳຮ້ອງຂໍຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂໍຂຶ້ນທະບຽນຜົນງານດ້ານວິຈິດສິນ ຕ້ອງຍື່ນຄຳຮ້ອງຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ໂດຍຜ່ານຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ບ່ອນຕົນອາໄສຢູ່ ຫຼື ບ່ອນທີ່ຜົນງານດ້ານວິຈິດສິນຕັ້ງຢູ່.

ສຳລັບຜົນງານດ້ານວິຈິດສິນ ທີ່ຢູ່ໃນການຄອບຄອງຂອງສຳນັກງານຜູ້ຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ, ສົມບັດມິ່ງເມືອງ ໃຫ້ຍື່ນຄຳຮ້ອງຂໍຂຶ້ນທະບຽນ ນຳກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 30 ການພິຈາລະນາການຂຶ້ນທະບຽນ**

ພາຍຫຼັງໄດ້ຮັບຄຳຮ້ອງຂໍຂຶ້ນທະບຽນຜົນງານດ້ານວິຈິດສິນແລ້ວ ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ຕ້ອງພິຈາລະນາຄຳຮ້ອງດັ່ງກ່າວ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ການຂຶ້ນທະບຽນນັ້ນ ໃຫ້ປະຕິບັດຕາມລະບຽບການ ກ່ຽວກັບການຂຶ້ນທະບຽນຜົນງານດ້ານວິຈິດສິນ ທີ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ວາງອອກ.

**ມາດຕາ 31 ການເກັບຮັກສາເອກະສານຂຶ້ນທະບຽນ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ເກັບຮັກສາເອກະສານຂຶ້ນທະບຽນກ່ຽວກັບຜົນງານດ້ານວິຈິດສິນ ໂດຍເກັບມ້ຽນໃນຖານຂໍ້ມູນ ຫຼື ຫ້ອງເກັບມ້ຽນໄວ້ສະເພາະ ເພື່ອບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ.

**ມາດຕາ 32 ການປ່ຽນແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຫັນວ່າ ການຂຶ້ນທະບຽນຜົນງານດ້ານວິຈິດສິນບໍ່ຖືກຕ້ອງ ກໍມີສິດຮ້ອງຂໍຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນອາໄສຢູ່ ເພື່ອໃຫ້ປ່ຽນແປງ ຫຼື

ລຶບລ້າງ. ໃນກໍລະນີຂະແໜງການດັ່ງກ່າວ ຫາກບໍ່ພິຈາລະນາ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ກໍມີສິດຮ້ອງຂໍຕໍ່ສານປະຊາຊົນ ເພື່ອໃຫ້ປັບປຸງແປງ ຫຼື ລຶບລ້າງ ການຂຶ້ນທະບຽນດັ່ງກ່າວ.

ສໍາລັບການຂຶ້ນທະບຽນທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດຂອງຜູ້ອື່ນນັ້ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ກໍມີສິດຂໍຄັດຄ້ານການຂຶ້ນທະບຽນ ເພື່ອໃຫ້ຂະແໜງການທີ່ກ່ຽວຂ້ອງພິຈາລະນາ ຕາມກົດໝາຍ.

ໃນກໍລະນີຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຫາກເຫັນວ່າການຂຶ້ນທະບຽນຜົນງານດ້ານວິຈິດສິນ ບໍ່ຖືກຕ້ອງ ກໍມີສິດປັບປຸງແປງ ຫຼື ລຶບລ້າງໄດ້ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນຮູ້ ຫຼື ພົບເຫັນ ເປັນຕົ້ນໄປ.

ການປັບປຸງແປງ, ການລຶບລ້າງ ແລະ ການຄັດຄ້ານ ການຂຶ້ນທະບຽນ ຕ້ອງພິຈາລະນາພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ເປັນຕົ້ນໄປ.

### ມາດຕາ 33 ການຈໍາລອງແບບ

ການຈໍາລອງແບບ ແມ່ນ ການສ້າງ ຫຼື ຜະລິດ ວັດຖຸໃໝ່ ດ້ວຍການກ່າຍເອົາ ຂະໜາດ, ຊັດສ່ວນ, ຮູບຊົງ, ຮູບແບບ, ສີສັນ, ການຕົບແຕ່ງ ລວມທັງຈຸດພິເສດອື່ນ ໃຫ້ຖືກຕ້ອງຕາມແບບຕົ້ນສະບັບ ແລະ ຕ້ອງໃສ່ເຄື່ອງໝາຍຂອງວັດຖຸຈໍາລອງນັ້ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຈໍາລອງແບບຜົນງານດ້ານວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ລວມທັງເຈົ້າຂອງລິຂະສິດ.

ສໍາລັບຮູບແບບ, ຂັ້ນຕອນການອະນຸຍາດ ລວມທັງສິດ ແລະ ພັນທະ ຂອງຜູ້ຈໍາລອງແບບ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 34 ການສ້າງໃໝ່

ການສ້າງໃໝ່ ແມ່ນ ການສ້າງຜົນງານດ້ານວິຈິດສິນຂຶ້ນໃໝ່ ໂດຍກ່າຍເອົາ ຮູບຊົງ, ສັດສ່ວນ, ຮູບແບບ, ສີສັນ, ລວດລາຍ, ຮູບຮ່າງ ລວມທັງລັກສະນະ ແລະ ຈຸດພິເສດອື່ນ ຂອງຜົນງານດ້ານວິຈິດສິນທີ່ມີແລ້ວ ຊຶ່ງຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

ສໍາລັບ ການອອກແບບ, ການສ້າງໃໝ່ ສະຖາປັດຕະຍະກໍາສິນ ເປັນຕົ້ນ ຕຶກ, ອາຄານ, ອະນຸສາວະລີ, ພຣະພຸດທະຮູບ, ສິມ, ທໍແຈກ, ຫໍກອງ, ທາດ, ກຸດຕິ, ປະຕູໂຂງ, ສາລາໂຮງທໍາ, ຫໍໄຕ, ຫໍຫຼັກເມືອງ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 35 ການຄົ້ນຄວ້າ, ວິໄຈ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ໄດ້ຮັບການສົ່ງເສີມ ໃຫ້ດໍາເນີນການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ດ້ວຍນະໂຍບາຍຕ່າງໆ ຕາມກົດໝາຍ.

ການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ່ວມມືກັບຕ່າງປະເທດ ໃນການຄົ້ນຄວ້າ, ວິໄຈ ກ່ຽວກັບວິຈິດສິນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ຂໍ້ມູນ ແລະ ຜົນ ຂອງການຄົ້ນຄວ້າ, ວິໄຈ ຕ້ອງມອບຕົ້ນສະບັບ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເກັບຮັກສາໄວ້ ແລະ ໂຄສະນາ ເຜີຍແຜ່ ຕາມລະບຽບການ.

**ມາດຕາ 36 ການສົ່ງອອກ ເພື່ອການວິໄຈ ແລະ ການວາງສະແດງ**

ການສົ່ງອອກຜົນງານດ້ານວິຈິດສິນ ເພື່ອການວິໄຈ ແລະ ການວາງສະແດງ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ການສົ່ງອອກຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ເພື່ອການວິໄຈ ແລະ ການວາງສະແດງ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຕ້ອງໄດ້ນຳເອົາຜົນງານດ້ານວິຈິດສິນດັ່ງກ່າວ ພ້ອມດ້ວຍຜົນຂອງການວິໄຈກັບຄືນປະເທດ ພາຍໃນເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບອະນຸຍາດສົ່ງອອກ ເປັນຕົ້ນໄປ.

**ມາດຕາ 37 ການນຳເຂົ້າ, ການໂຄສະນາ ການເຜີຍແຜ່ ຫຼື ຈຳໜ່າຍ**

ການນຳເຂົ້າ, ການໂຄສະນາ ການເຜີຍແຜ່ ຫຼື ຈຳໜ່າຍ ແບບ, ແມ່ພິມ ແລະ ຜົນງານດ້ານວິຈິດສິນຂອງຕ່າງປະເທດ ຕ້ອງໄດ້ຮັບການກວດກາ ແລະ ອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 38 ການໂອນ**

ຜົນງານດ້ານວິຈິດສິນທີ່ໄດ້ຂຶ້ນທະບຽນແລ້ວ ສາມາດໂອນກຳມະສິດ, ລິຂະສິດ ໃຫ້ຜູ້ອື່ນໄດ້ ແຕ່ຕ້ອງແຈ້ງໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນຕົນຂຶ້ນທະບຽນ ແລະ ດຳເນີນການໂອນຕາມກົດໝາຍ.

**ມາດຕາ 39 ການ ຊື້ ຂາຍ, ແລກປ່ຽນ ແລະ ການເຊົ່າ**

ຜົນງານດ້ານວິຈິດສິນລະດັບທ້ອງຖິ່ນ ແລະ ຜົນງານວິຈິດສິນລະດັບຊາດ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນກຳມະສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງມີຈຸດປະສົງ ຊື້ ຂາຍ, ແລກປ່ຽນ ຕ້ອງໄດ້ຂໍອະນຸຍາດນຳລັດຖະບານ ຫຼື ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມແຕ່ລະກໍລະນີ. ໃນກໍລະນີຜົນງານດ້ານວິຈິດສິນນັ້ນ ຫາກມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ລັດມີບຸລິມະສິດຊື້ເອົາຕາມລາຄາທີ່ຕົກລົງກັນ.

ຜົນງານດ້ານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບ ບໍ່ສາມາດ ຊື້ ຂາຍ, ແລກປ່ຽນ ຫຼື ມອບເປັນຂອງຂວັນໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ສຳລັບການເຊົ່າຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບລະຫວ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ບົນພື້ນຖານການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 40 ການສືບທອດ**

ຜົນງານດ້ານວິຈິດສິນ ທີ່ໄດ້ຂຶ້ນທະບຽນແລ້ວ ສາມາດສືບທອດ, ມອບໂອນໃຫ້ຜູ້ອື່ນ ແຕ່ກ່ອນຈະດຳເນີນການມອບໂອນໃຫ້ຜູ້ອື່ນສືບທອດນັ້ນຕ້ອງແຈ້ງ ຫຼື ຂໍອະນຸຍາດນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ໄດ້ຂຶ້ນທະບຽນ ຕາມແຕ່ລະກໍລະນີ.

ໃນກໍລະນີມີຫຼາຍຄົນ ໄດ້ຮັບການສືບທອດຮ່ວມກັນ ຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຜູ້ໃດຜູ້ໜຶ່ງ ເປັນຕົວແທນ.

## ໝວດທີ 2
## ການປົກປັກຮັກສາ ແລະ ການອະນຸລັກ ຜົນງານດ້ານວິຈິດສິນ

**ມາດຕາ 41 ການປົກປັກຮັກສາ ແລະ ການອະນຸລັກ ຜົນງານດ້ານວິຈິດສິນ**

ຜົນງານດ້ານວິຈິດສິນ ທີ່ໄດ້ຂຶ້ນທະບຽນແລ້ວ ຕ້ອງໄດ້ຮັບການປົກປັກຮັກສາ ແລະ ອະນຸລັກ ເພື່ອບໍ່ໃຫ້ຖືກທຳລາຍ ຫຼື ເສຍຫາຍຈາກການກະທຳຂອງຄົນ ຫຼື ຈາກໄພທຳມະຊາດ ໂດຍສະເພາະຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ.

**ມາດຕາ 42 ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເປັນເຈົ້າການ ແລະ ມີສ່ວນຮ່ວມ ໃນການບູລະນະສ້ອມແປງ, ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ ຕາມຂອບເຂດ ແລະ ຄວາມຮັບຜິດຊອບຂອງຕົນ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນລະດັບທ້ອງຖິ່ນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ຕົນຂຶ້ນທະບຽນ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນລະດັບຊາດ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ ແຕ່ລະປະເພດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 43 ເງື່ອນໄຂການບູລະນະສ້ອມແປງ ແລະ ການປະຕິສັງຂອນ ຜົນງານດ້ານວິຈິດສິນ**

ການບູລະນະສ້ອມແປງ ແລະ ການປະຕິສັງຂອນຜົນງານດ້ານວິຈິດສິນ ທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນ ວິສາຫະກິດສະເພາະ ຫຼື ວິສາຫະກິດ ທີ່ມີເງື່ອນໄຂ ໃນການບູລະນະສ້ອມແປງ ແລະ ການປະຕິສັງຂອນຜົນງານດ້ານວິຈິດສິນ ທີ່ມີນາຍຊ່າງສີມືທີ່ຊຳນານງານ ທາງດ້ານວິຈິດສິນ;

2. ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານວິຈິດສິນ ບ່ອນທີ່ໄດ້ຂຶ້ນທະບຽນ. ສໍາລັບວິຈິດສິນລະດັບຊາດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ;

3. ຕ້ອງຮັກສາຄຸນລັກສະນະເດີມ ຂອງຜົນງານດ້ານວິຈິດສິນນັ້ນໄວ້ ເປັນຕົ້ນ ຮູບຮ່າງ, ສີສັນ, ລວດລາຍ ລວມທັງວັດສະດຸ.

**ມາດຕາ 44 ການຟື້ນຟູ ແລະ ການອະນຸລັກ ສະກຸນຊ່າງວິຈິດສິນ**

ການຟື້ນຟູ ແລະ ການອະນຸລັກ ສະກຸນຊ່າງວິຈິດສິນ ແມ່ນ ການປົກປັກຮັກສາ, ການສົ່ງເສີມ ດ້ານວິຈິດສິນ ແລະ ເສີມຂະຫຍາຍພູມປັນຍາສະກຸນຊ່າງວິຈິດສິນລາວ ໃຫ້ມີຄວາມ ຍືນຍົງ, ອຸດົມສົມບູນ ແລະ ຮັ່ງມີຂຶ້ນ ເພື່ອຊຸກຍູ້ ແລະ ສົ່ງເສີມ ການສຶກສາຄົ້ນຄວ້າ, ຊອກຮູ້ຄຸນຄ່າທາງດ້ານ ວັດທະນະທໍາ ແລະ ປະຫວັດສາດ ກ່ຽວກັບວິຈິດສິນ ທີ່ເປັນພື້ນຖານໃຫ້ແກ່ສະກຸນຊ່າງວິຈິດສິນລາວ ບໍ່ໃຫ້ເສື່ອມໂຊມ, ເສຍຫາຍ ຫຼື ຖືກທໍາລາຍ.

## ພາກທີ V
## ປະເພດ ແລະ ນາມມະຍົດ ສິລະປິນວິຈິດສິນ
### ໝວດທີ 1
### ປະເພດສິລະປິນວິຈິດສິນ

**ມາດຕາ 45 ປະເພດສິລະປິນວິຈິດສິນ**

ສິລະປິນວິຈິດສິນ ມີ ຫົກປະເພດ ດັ່ງນີ້ :

1. ຈິດຕະກອນ;
2. ປະຕິມາກອນ;
3. ສິລະປິນພາບພິມ;
4. ນັກນິເທດສິນ;
5. ນັກສະຖາປັດຕະຍະກໍາສິນ;
6. ນັກຫັດຖະກໍາສິນ.

ສິລະປິນວິຈິດສິນ ປະກອບດ້ວຍ ສິລະປິນວິຈິດສິນ ອາຊີບ, ເຄິ່ງອາຊີບ ແລະ ສະໝັກຫຼິ້ນ.

**ມາດຕາ 46 ຈິດຕະກອນ**

ຈິດຕະກອນ ແມ່ນ ນັກແຕ້ມ ທີ່ແຕ້ມດ້ວຍ ສໍ, ສີນໍ້າ, ສີນໍ້າມັນ, ສີໂປສເຕີ, ສີອະຄຣີລິກ, ສໍຖ່ານຄາບອນ ແລະ ອຸປະກອນການແຕ້ມອື່ນ ລົງໃສ່ ເຈ້ຍ, ໄມ້ອັດ, ຜ້າແພ, ຝາ ຊຶ່ງຮູບແຕ້ມເຫຼົ່ານັ້ນ ມີຫຼາຍລັກສະນະ, ຫຼາຍຮູບແບບ ແລະ ເນື້ອໃນ ເຊັ່ນ ຮູບເໝືອນຄົນ, ຮູບສັດ, ຮູບສິ່ງວັດຖຸ, ຮູບທໍາມະຊາດ, ຮູບຊີວິດປະຈໍາວັນ ແລະ ຮູບປະກອບເລື່ອງ.

ມາດຕາ 47 ປະຕິມາກອນ

ປະຕິມາກອນ ແມ່ນ ນັກ ປັ້ນ, ແກະສະຫຼັກ, ຫຼໍ່, ຄວັດ ດ້ວຍວັດສະດຸຕ່າງໆ ເປັນຕົ້ນ ດິນໜຽວ, ຂີ້ເຜີ້ງ, ໄມ້, ຫີນ, ຫີນອ່ອນ, ປູນປຣາສເຕີ, ໂລຫະ ໃຫ້ເປັນຜົນງານດ້ານວິຈິດສິນ.

ມາດຕາ 48 ສິລະປິນພາບພິມ

ສິລະປິນພາບພິມ ແມ່ນ ນັກອອກແບບ ແລະ ແກະແບບ ເພື່ອພິມດ້ວຍ ນໍ້າມຶກ, ສີໂປສເຕີ, ສີອະຄຣິລິກ ແລະ ສີອື່ນ ລົງໃສ່ ເຈ້ຍ, ວັດສະດຸ ຫຼື ໂລຫະອື່ນ ໃຫ້ເປັນຜົນງານ ແລະ ຜະລິດຕະພັນສິນ.

ມາດຕາ 49 ນັກນິເທດສິນ

ນັກນິເທດສິນ ແມ່ນ ນັກອອກແບບງານສິນ ເພື່ອໂຄສະນາ ເຜີຍແຜ່ ໂດຍຜ່ານພາຫະນະສື່ມວນຊົນ ກ່ຽວກັບຜະລິດຕະພັນ, ສິນຄ້າ, ວັດຖຸ ແລະ ເຄື່ອງຂອງ ເປັນຕົ້ນ ນັກອອກແບບ ຜະລິດຕະພັນ, ສື່ສິ່ງພິມ, ສື່ໂຄສະນາ, ສື່ເອເລັກໂຕຣນິກ.

ມາດຕາ 50 ນັກສະຖາປັດຕະຍະກຳສິນ

ນັກສະຖາປັດຕະຍະກຳສິນ ແມ່ນ ນັກອອກແບບໂຄງສ້າງ ແລະ ການຕົບແຕ່ງ ສະຖາປັດຕະຍະກຳສິນ ຊຶ່ງປະກອບດ້ວຍ ໂຄງສ້າງ, ຮູບຊົງການຕົບແຕ່ງພາຍໃນ ແລະ ພາຍນອກ ຂອງ ຕຶກ, ອາຄານ, ສິມ, ກຸດຕິ, ຫໍແຈກ, ຫໍກອງ, ຫໍພະ, ປະຕູໂຂງ, ທາດ, ຫໍຫຼັກເມືອງ ທີ່ຕົບແຕ່ງດ້ວຍລວດລາຍສິນລະປະ ທີ່ມີລັກສະນະຊາດ ອັນປານີດວິຈິດບັນຈົງ.

ມາດຕາ 51 ນັກຫັດຖະກຳສິນ

ນັກຫັດຖະກຳສິນ ແມ່ນ ນັກສ້າງ ແລະ ປະດິດແຕ່ງ ຜະລິດຕະພັນຫັດຖະກຳ ທີ່ມີສີມືລະອຽດ ທີ່ເປັນເອກະລັກສະເພາະ ເປັນຕົ້ນ ເຄື່ອງຕົບແຕ່ງ, ເຄື່ອງໃຊ້ສອຍ, ເຄື່ອງນຸ່ງຫົ່ມ, ເຄື່ອງປະດັບ, ເຄື່ອງເອ້, ເຄື່ອງຈັກສານ.

ມາດຕາ 52 ສິດ ແລະ ພັນທະ ຂອງສິລະປິນວິຈິດສິນ

ສິລະປິນວິຈິດສິນ ມີ ສິດ ດັ່ງນີ້:

1. ສະເໜີພາບຕໍ່ໜ້າກົດໝາຍ ໃນການສຶກສາ, ຄົ້ນຄວ້າ, ວິໄຈ ເພື່ອຍົກລະດັບວິຊາສະເພາະດ້ານວິຈິດສິນ;

2. ປະດິດສ້າງ ແລະ ວາງສະແດງ ຜົນງານຂອງຕົນ ທີ່ຜ່ານການກວດກາ ແລະ ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕໍ່ສາທາລະນະຊົນ ລວມທັງການໂຄສະນາ ເຜີຍແຜ່ ຜ່ານສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ;

3. ເຄື່ອນໄຫວ, ດຳເນີນທຸລະກິດ ທາງດ້ານວິຈິດສິນ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ມອບຜົນງານຜະລິດຕະພັນດ້ານວິຈິດສິນຂອງຕົນ ເພື່ອເປັນມໍຣະດົກ ໃຫ້ແກ່ອົງການທີ່ກ່ຽວຂ້ອງຂອງລັດ ໃນການສຶກສາ, ຄົ້ນຄວ້າ ແລະ ວິໄຈ ກ່ຽວກັບວິຈິດສິນ;

5. ຖ່າຍທອດ ຄວາມຮູ້, ຄວາມສາມາດ, ບົດຮຽນ ແລະ ປະສົບການ ເພື່ອບຳລຸງ, ສ້າງ ສິລະປິນວິຈິດສິນຮຸ່ນສືບທອດ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສິລະປິນວິຈິດສິນ ມີ ພັນທະ ດັ່ງນີ້:

1. ປົກປັກຮັກສາ, ອະນຸລັກ, ເສີມຂະຫຍາຍ ມູນເຊື້ອສິລະປະວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ;

2. ເຄົາລົບ ແລະ ປະຕິບັດ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບລິຂະສິດຂອງຜະລິດຕະພັນດ້ານວິຈິດສິນ;

3. ປະຕິບັດພັນທະ ພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ນາມມະຍົດສິລະປິນວິຈິດສິນ

### ມາດຕາ 53 ນາມມະຍົດສິລະປິນວິຈິດສິນ

ນາມມະຍົດສິລະປິນວິຈິດສິນ ແມ່ນ ການຍ້ອງຍໍ, ຈາລຶກຄຸນງາມຄວາມດີ ແລະ ຍັ້ງຢືນຜົນງານທີ່ໂດດເດັ່ນຂອງນັກສິລະປິນວິຈິດສິນ ທີ່ໄດ້ສ້າງຜົນງານດ້ານວິຈິດສິນ ແລະ ເຄື່ອນໄຫວວຽກງານວິຈິດສິນ ຊຶ່ງເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ເປັນທີ່ຍອມຮັບຂອງສັງຄົມ.

ນາມມະຍົດສິລະປິນວິຈິດສິນ ມີ ສອງປະເພດ ດັ່ງນີ້:

1. ສິລະປິນວິຈິດສິນແຫ່ງຊາດ;

2. ສິລະປິນວິຈິດສິນດີເດັ່ນ.

### ມາດຕາ 54 ສິລະປິນວິຈິດສິນແຫ່ງຊາດ

ສິລະປິນວິຈິດສິນແຫ່ງຊາດ ແມ່ນ ຜູ້ທີ່ໄດ້ຮັບນາມມະຍົດຂັ້ນສູງສຸດ ດ້ວຍການຮັບຮອງຂອງປະທານປະເທດ ແຫ່ງ ສປປ ລາວ ຕາມການສະເໜີຂອງນາຍົກລັດຖະມົນຕີ.

ບຸກຄົນທີ່ຈະໄດ້ຮັບນາມມະຍົດສິລະປິນວິຈິດສິນແຫ່ງຊາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ສິນທຳ, ມີຄວາມຮູ້, ຄວາມສາມາດ ແລະ ຈົງຮັກພັກດີຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ;

2. ມີຜົນງານດ້ານວິຈິດສິນອັນໂດດເດັ່ນໃດໜຶ່ງ ທີ່ມີຫົວຄິດປະດິດສ້າງ ຊຶ່ງເປັນການປົກປັກຮັກສາ, ອະນຸລັກ, ເສີມຂະຫຍາຍ ເປັນທີ່ຍອມຮັບຂອງສັງຄົມ;

3. ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນຂະບວນການສິລະປະວັດທະນະທຳ ໃນແຕ່ລະໄລຍະ, ສ້າງຮຸ່ນຄົນສືບທອດ, ຖ່າຍທອດບົດຮຽນ ແລະ ປະສົບການ ໃຫ້ເພື່ອນຮ່ວມງານຢ່າງຈິງໃຈ;

4. ປະກອບສ່ວນເຂົ້າໃນຂະບວນການສິລະປະວິຈິດສິນ ແລະ ປະກອບອາຊີບດ້ານວິຈິດສິນ ຢ່າງໜ້ອຍ ສິບຫ້າປີ ແລະ ໄດ້ຮັບນາມມະຍົດສິລະປິນວິຈິດສິນດີເດັ່ນມາກ່ອນ.

**ມາດຕາ 55 ສິລະປິນວິຈິດສິນດີເດັ່ນ**

ສິລະປິນວິຈິດສິນດີເດັ່ນ ແມ່ນ ຜູ້ທີ່ໄດ້ຮັບນາມມະຍົດ ດ້ວຍການຮັບຮອງຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຕາມການສະເໜີຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍຜ່ານກະຊວງພາຍໃນ.

ບຸກຄົນທີ່ຈະໄດ້ຮັບນາມມະຍົດສິລະປິນວິຈິດສິນດີເດັ່ນ ຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ວັກທີສອງ ຂໍ້ 1 ແລະ 2 ຂອງກົດໝາຍສະບັບນີ້ ແລະ ໄດ້ປະກອບສ່ວນເຂົ້າໃນວຽກງານວິຈິດສິນ ແລະ ປະກອບອາຊີບດ້ານວິຈິດສິນ ຢ່າງໜ້ອຍ ສິບປີ.

**ມາດຕາ 56 ອົງການທີ່ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ**

ອົງການທີ່ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ ມີ ດັ່ງນີ້:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ສະມາຄົມວິຈິດສິນລາວ.

**ມາດຕາ 57 ການປະກອບເອກະສານ**

ເອກະສານປະກອບໃນການສະເໜີຂໍນາມມະຍົດສິລະປິນວິຈິດສິນ ມີ ດັ່ງນີ້:

1. ໜັງສືສະເໜີຂໍນາມມະຍົດ ຈາກອົງການທີ່ສະເໜີໃຫ້ນາມມະຍົດ;
2. ປະຫວັດ, ຜົນງານ ຫຼື ຜະລິດຕະພັນດ້ານວິຈິດສິນຂອງຜູ້ສະເໜີຂໍນາມມະຍົດ;
3. ເອກະສານຢັ້ງຢືນຜົນງານ ຫຼື ຜະລິດຕະພັນດ້ານວິຈິດສິນ ຈາກອົງການຮັບຜິດຊອບທີ່ກ່ຽວຂ້ອງ.

**ມາດຕາ 58 ການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ**

ການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ ໃຫ້ອີງຕາມຜົນງານ ແລະ ຜະລິດຕະພັນ ດ້ານວິຈິດສິນຕົວຈິງ ຢ່າງຄົບຖ້ວນ, ພາວະວິໄສ ບົນພື້ນຖານເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ແລະ ມາດຕາ 55 ຂອງກົດໝາຍສະບັບນີ້.

ສຳລັບລາຍລະອຽດ ກ່ຽວກັບຂັ້ນຕອນການພິຈາລະນາໃຫ້ນາມມະຍົດສິລະປິນວິຈິດສິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 59 ນະໂຍບາຍຕໍ່ສິລະປິນວິຈິດສິນທີ່ໄດ້ຮັບນາມມະຍົດ**

ສິລະປິນວິຈິດສິນ ທີ່ໄດ້ຮັບນາມມະຍົດ ໄດ້ຮັບນະໂຍບາຍ ດັ່ງນີ້:

1. ໃບຢັ້ງຢືນ ແລະ ຫຼຽນນາມມະຍົດ;
2. ນະໂຍບາຍ ທີ່ເປັນວັດຖຸ ແລະ ຈິດໃຈ;
3. ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ການຖອນນາມມະຍົດສິລະປິນວິຈິດສິນ**

ນາມມະຍົດສິລະປິນວິຈິດສິນ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ມີການກະທຳທີ່ເສື່ອມເສຍກຽດສັກສີ;
2. ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້;

3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທຳຜິດໂດຍເຈດຕະນາ;

4. ນຳໃຊ້ນາມມະຍົດສິລະປິນວິຈິດສິນໂດຍບໍ່ຖືກຕ້ອງ.

## ພາກທີ VI
## ການດຳເນີນທຸລະກິດກ່ຽວກັບວິຈິດສິນ

### ມາດຕາ 61 ການດຳເນີນທຸລະກິດກ່ຽວກັບວິຈິດສິນ

ການດຳເນີນທຸລະກິດກ່ຽວກັບວິຈິດສິນ ແມ່ນ ການລົງທຶນດ້ານວິຈິດສິນ ເພື່ອເປັນການຫາລາຍໄດ້ ແລະ ຜົນຕອບແທນດ້ານເສດຖະກິດ ທັງເປັນການໂຄສະນາ ເຜີຍແຜ່ ວັດທະນະທຳອັນດີງາມຂອງຊາດ ຊຶ່ງປະກອບດ້ວຍ:

1. ການວາງສະແດງວິຈິດສິນ;
2. ຫໍພິພິທະພັນວິຈິດສິນ ເອກະຊົນ;
3. ການສ້າງຜະລິດຕະພັນວິຈິດສິນ;
4. ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ.

### ມາດຕາ 62 ການວາງສະແດງວິຈິດສິນ

ການວາງສະແດງວິຈິດສິນ ມີ ສາມປະເພດ ດັ່ງນີ້:

1. ການວາງສະແດງ ເພື່ອເຜີຍແຜ່ໃຫ້ມວນຊົນເຂົ້າຊົມ;
2. ການວາງສະແດງ ເພື່ອການປົກປັກຮັກສາ, ພັດທະນາ, ອະນຸລັກ, ບູລະນະປະຕິສັງຂອນ, ສຶກສາ ແລະ ຄົ້ນຄວ້າວິໄຈ;
3. ການວາງສະແດງ ເພື່ອການຄ້າ.

ສະຖານທີ່ວາງສະແດງ ແລະ ຫ້ອງວາງສະແດງ ຕ້ອງໃຫ້ມີພື້ນທີ່ ທີ່ເໝາະສົມ, ມີອຸປະກອນອຳນວຍຄວາມສະດວກ ຢ່າງພຽງພໍ ຕາມຂະໜາດຂອງສະຖານທີ່ ແລະ ຫ້ອງວາງສະແດງ, ຮັບປະກັນຄວາມປອດໄພ, ມີຄວາມສະດວກສະບາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

### ມາດຕາ 63 ຫໍພິພິທະພັນວິຈິດສິນ ເອກະຊົນ

ຫໍພິພິທະພັນວິຈິດສິນ ເອກະຊົນ ແມ່ນ ສະຖານທີ່ສະສົມ, ທ້ອນໂຮມ, ເກັບຮັກສາ, ອະນຸລັກ ຜົນງານ ແລະ ຜະລິດຕະພັນ ວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ເພື່ອວາງສະແດງ ແລະ ເຜີຍແຜ່ ໃຫ້ມວນຊົນເຂົ້າຊົມ.

ຫໍພິພິທະພັນວິຈິດສິນ ເອກະຊົນ ຕ້ອງໃຫ້ມີພື້ນທີ່ ທີ່ເໝາະສົມ, ມີອຸປະກອນອຳນວຍຄວາມສະດວກ ຢ່າງພຽງພໍ ຕາມຂະໜາດຂອງຫໍພິພິທະພັນວິຈິດສິນ, ຮັບປະກັນຄວາມປອດໄພ, ມີຄວາມສະດວກສະບາຍ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

### ມາດຕາ 64 ການສ້າງຜະລິດຕະພັນວິຈິດສິນ

ການສ້າງຜະລິດຕະພັນວິຈິດສິນ ແມ່ນ ການດຳເນີນທຸລະກິດ ກ່ຽວກັບການແຕ້ມ, ຄວັດ, ການແກະສະຫຼັກ, ການຫຼໍ່, ການປັ້ນ ຫັດຖະກຳສິນ ແລະ ການດຳເນີນທຸລະກິດສ້າງຜະລິດຕະພັນວິຈິດສິນອື່ນ.

**ມາດຕາ 65 ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ**

ສູນຝຶກອົບຮົມ ແລະ ສະຖານການສຶກສາ ວິຈິດສິນ ແມ່ນ ສະຖານທີ່ ທີ່ດຳເນີນທຸລະກິດ ກ່ຽວກັບການຝຶກອົບຮົມ ແລະ ການສຶກສາ ວິຈິດສິນ ຊຶ່ງເປັນບ່ອນຖ່າຍທອດຄວາມຮູ້, ຄວາມສາມາດ ແລະ ທັກສະດ້ານວິຊາຊີບ ກ່ຽວກັບວິຈິດສິນ ເປັນຕົ້ນ ການແຕ້ມ, ການຄວັດ, ການແກະສະຫຼັກ, ການຫຼໍ່, ການປັ້ນດິນເຜົາ, ການຈັກສານ, ການພິມ.

**ມາດຕາ 66 ເງື່ອນໄຂການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ການດຳເນີນທຸລະກິດກ່ຽວກັບວິຈິດສິນ ມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ ຕາມກົດໝາຍ;
2. ມີຖານະການເງິນ ເພື່ອໃຫ້ສາມາດເຄື່ອນໄຫວດຳເນີນທຸລະກິດ;
3. ມີສະຖານທີ່ ທີ່ເໝາະສົມ ສຳລັບການດຳເນີນທຸລະກິດ ຢູ່ ສປປ ລາວ;
4. ມີໂຄງລ່າງພື້ນຖານ, ພາຫະນະ, ວັດຖຸປະກອນ ຮັບໃຊ້ການເຄື່ອນໄຫວດຳເນີນທຸລະກິດ ທີ່ໄດ້ມາດຕະຖານ;
5. ມີບຸກຄະລາກອນ ທີ່ມີວິຊາສະເພາະ, ມີປະສົບການ ດ້ານວິຈິດສິນ ແລະ ບຸກຄະລາກອນອື່ນທີ່ກ່ຽວຂ້ອງ.

**ມາດຕາ 67 ການສ້າງຕັ້ງ ແລະ ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງ ແລະ ດຳເນີນທຸລະກິດ ກ່ຽວກັບວິຈິດສິນ ຕ້ອງຂໍຂຶ້ນທະບຽນວິສາຫະກິດນຳຂະແໜງການທີ່ກ່ຽວຂ້ອງ ແລະ ຂໍອະນຸຍາດທາງດ້ານວິຊາການນຳຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 68 ການພິຈາລະນາອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ**

ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕ້ອງພິຈາລະນາທາງດ້ານວິຊາການໃນການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ ພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບທີ່ກ່ຽວຂ້ອງ ເປັນຕົ້ນໄປ.

**ມາດຕາ 69 ການໂຈະ, ການຖອນ ຫຼື ການຢຸດເຊົາ ການດຳເນີນທຸລະກິດກ່ຽວກັບວິຈິດສິນ**

ອົງການຄຸ້ມຄອງວຽກງານວິຈິດສິນ ສາມາດໂຈະການເຄື່ອນໄຫວ, ຖອນໃບອະນຸຍາດ ຫຼື ໃຫ້ຢຸດເຊົາການດຳເນີນທຸລະກິດກ່ຽວກັບວິຈິດສິນ ຖ້າວິສາຫະກິດ ຫາກບໍ່ເຄື່ອນໄຫວດຳເນີນທຸລະກິດ ໄປຕາມຈຸດປະສົງ, ເນື້ອໃນ, ຮູບແບບ ແລະ ປະເພດການດຳເນີນທຸລະກິດທີ່ໄດ້ຮັບອະນຸຍາດ.

ໃນກໍລະນີວິສາຫະກິດທີ່ດຳເນີນທຸລະກິດກ່ຽວກັບວິຈິດສິນ ມີຈຸດປະສົງຢຸດເຊົາການເຄື່ອນໄຫວດຳເນີນທຸລະກິດດັ່ງກ່າວ ຕ້ອງແຈ້ງເປັນລາຍລັກອັກສອນ ຢ່າງຊ້າ ສາມສິບວັນ ຕໍ່ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງ.

# ພາກທີ VII
# ສະມາຄົມວິຈິດສິນລາວ

**ມາດຕາ 70 ສະມາຄົມວິຈິດສິນລາວ**

ສະມາຄົມວິຈິດສິນລາວ ແມ່ນ ການຈັດຕັ້ງສັງຄົມວິຊາຊີບ ທີ່ສ້າງຕັ້ງຂຶ້ນຕາມລະບຽບການ ແລະ ຮັບຮູ້ໂດຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີພາລະບົດບາດ ເປັນໃຈກາງ, ເຄື່ອນໄຫວ ແລະ ເຕົ້າໂຮມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວກ່ຽວກັບວິຈິດສິນ, ປະສານສົມທົບກັບການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ, ປະກອບສ່ວນໃນການປະຕິບັດແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງສະມາຄົມວິຈິດສິນລາວ**

ສະມາຄົມວິຈິດສິນລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມການສ້າງ ແລະ ການພັດທະນາ ຂະບວນການ ກ່ຽວກັບວຽກງານວິຈິດສິນໃນຂອບເຂດທົ່ວປະເທດ;
2. ໂຄສະນາ ເຜີຍແຜ່ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວິຈິດສິນ;
3. ຊຸກຍູ້, ສົ່ງເສີມ ແລະ ໃຫ້ການສະໜັບສະໜູນ ການເຄື່ອນໄຫວ ແລະ ການພັດທະນາວິຈິດສິນ;
4. ຄຸ້ມຄອງ, ຮຽກໂຮມສະມາຊິກສະມາຄົມ ເຂົ້າຮ່ວມກອງປະຊຸມຂອງຕົນ;
5. ປຸກລະດົມ, ຂົນຂວາຍ, ຊອກແຫຼ່ງທຶນ ເພື່ອເຄື່ອນໄຫວກິດຈະກຳກ່ຽວກັບວິຈິດສິນ;
6. ຄົ້ນຄວ້າ ແລະ ສະເໜີໃຫ້ນາມມະຍົດສິລະປິນວິຈິດສິນ ຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
7. ສະເໜີການປະຕິບັດນະໂຍບາຍ ຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ ແລະ ປະຕິບັດມາດຕະການ ຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວບໍ່ຖືກຕ້ອງກ່ຽວກັບວິຈິດສິນຕາມກົດໝາຍ;
8. ພົວພັນ, ຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານວິຈິດສິນ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານວິຈິດສິນ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VIII
# ຂໍ້ຫ້າມ

### ມາດຕາ 72 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳເອົາຜົນງານດ້ານວິຈິດສິນ ເປັນເຄື່ອງມືໃນການເຄື່ອນໄຫວ, ໂຄສະນາບິດເບືອນ ແນວທາງ ນະໂຍບາຍ, ກົດໝາຍ ໃສ່ຮ້າຍ ປ້າຍສີ, ຍຸແຍ່, ແບ່ງແຍກ ຄວາມສາມັກຄີປອງດອງລະຫວ່າງບັນດາເຜົ່າ, ສາສະໜາ ແລະ ມ້າງເພ, ທຳລາຍມູນເຊື້ອສິລະປະວັດທະນະທຳ ອັນດີງາມຂອງຊາດ, ຂອງເຜົ່າ;

2. ນຳເອົາສິລະປະດ້ານວິຈິດສິນທີ່ ເສື່ອມຊາມ, ຊອດກະຈາ, ລາມົກ, ອະນາຈານ ແລະ ສິ່ງອື່ນ ທີ່ຝືນຮີດຄອງປະເພນີອັນດີງາມ ມາຈັດຕັ້ງເຜີຍແຜ່ໃນ ສປປ ລາວ, ຍຸຍົງ ສົ່ງເສີມເບື່ອເມົາກໍ່ໃຫ້ເກີດຄວາມຮຸນແຮງ, ອາຊະຍາກຳ, ສິ່ງເສບຕິດ, ການພະນັນ ແລະ ການເຊື່ອຖືງົມງວາຍ;

3. ທຳລາຍພຣະພຸດທະຮູບ, ຜົນງານດ້ານວິຈິດສິນປະເພດຕ່າງໆ ທີ່ເປັນມູນເຊື້ອ, ສາສະນະສະຖານ ແລະ ສະຖານທີ່ປະຫວັດສາດ;

4. ລັກໂລບ, ສໍ້ໂກງເອົາຜົນງານດ້ານວິຈິດສິນຂອງຜູ້ອື່ນ ໄປເປັນຂອງຕົນ, ຮຽນແບບ, ກ່າຍ ຫຼື ລອກແບບ, ດັດແປງຜົນງານດ້ານວິຈິດສິນທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ລັກລອບ ຊື້ ຂາຍ, ແລກປ່ຽນ ຫຼື ມອບເປັນຂອງຂວັນ ຜົນງານວິຈິດສິນທີ່ມີຄຸນຄ່າສູງ, ໂດດເດັ່ນ ແລະ ຫາຍາກ ທີ່ເປັນຕົ້ນສະບັບ;

6. ນຳເອົາຜົນງານດ້ານວິຈິດສິນທຸກປະເພດ ທີ່ບໍ່ຜ່ານການກວດກາອອກໄປເຄື່ອນໄຫວ, ວາງສະແດງ ຫຼື ເຜີຍແຜ່ຜ່ານສື່ມວນຊົນ ຢູ່ພາຍໃນ ແລະ ຕ່າງປະເທດ;

7. ເຄື່ອນໄຫວວາງສະແດງຕາມສະຖານທີ່ຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 73 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບນັກສິລະປິນວິຈິດສິນ ຫຼື ຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ປອມແປງລາຍເຊັນເຈົ້າຂອງຜົນງານດ້ານວິຈິດສິນ ລວມທັງການປອມແປງສັນຍາລັກອື່ນທີ່ກ່ຽວຂ້ອງ;

2. ກົດໜ່ວງຖ່ວງດຶງເອກະສານ, ຕົວະຍົວະ, ຫຼອກລວງ, ສໍ້ໂກງ, ນາບຂູ່ ນັກສິລະປິນວິຈິດສິນ ແລະ ຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ເພື່ອສະແຫວງຫາຜົນປະໂຫຍດ ໃຫ້ຕົນເອງ, ຄອບຄົວ ແລະ ພັກພວກ;

3. ສວຍໃຊ້ ສິດ, ໜ້າທີ່ ຫຼື ຕຳແໜ່ງ ແລະ ບັງຄັບ ຫຼື ຮຽກຮ້ອງເອົາສິນບົນ ເພື່ອຜົນປະໂຫຍດສ່ວນຕົວ, ພີ່ນ້ອງ ແລະ ໝູ່ເພື່ອນ;

4. ນຳໃຊ້, ດັດແປງ, ປັບປ່ຽນເນື້ອໃນ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງຜະລິດຕະພັນ, ຜົນງານດ້ານວິຈິດສິນ, ການເຄື່ອນໄຫວຂອງນັກສິລະປິນວິຈິດສິນ ໂດຍບໍ່ໄດ້ຮັບອານຸຍາດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 74 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ**

ຫ້າມຜູ້ດຳເນີນທຸລະກິດກ່ຽວກັບວິຈິດສິນ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບວິຈິດສິນ ໂດຍບໍ່ໄດ້ຮັບອະນຸຍາດ;

2. ລັກໂລບ, ສໍ້ໂກງ ເອົາກຳມະສິດ, ລິຂະສິດ, ຜົນງານດ້ານວິຈິດສິນ ຂອງຜູ້ອື່ນມາເປັນຂອງຕົນເອງ ຫຼື ໂຄສະນາ ເຜີຍແຜ່ ໂດຍບໍ່ໄດ້ຮັບການເຫັນດີຈາກເຈົ້າຂອງ ກຳມະສິດ, ລິຂະສິດ ແລະ ການອະນຸຍາດຂອງອົງການຄຸ້ມຄອງທີ່ກ່ຽວຂ້ອງ;

3. ນຳເອົາຜະລິດຕະພັນວິຈິດສິນ ທັງພາຍໃນ ແລະ ຕ່າງປະເທດ ທຸກປະເພດໂດຍບໍ່ໄດ້ຮັບອະນຸຍາດໄປດຳເນີນທຸລະກິດ, ເຄື່ອນໄຫວ ໂຄສະນາ ເຜີຍແຜ່ ຜ່ານສື່ມວນຊົນ, ສື່ສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;

4. ຊື້ຈ້າງ, ໃຫ້ສິນບົນ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ ວຽກງານວິຈິດສິນ
### ໝວດທີ 1
### ການຄຸ້ມຄອງວຽກງານວິຈິດສິນ

**ມາດຕາ 75 ອົງການຄຸ້ມຄອງວຽກງານວິຈິດສິນ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານວິຈິດສິນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານວິຈິດສິນ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານວິຈິດສິນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ໃຫ້ເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນໃນຂອບເຂດທົ່ວປະເທດ;

4. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນດ້ານວິຈິດ;

5. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;

6. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

7. ຮັບຄຳຮ້ອງ ແລະ ພິຈາລະນາຂຶ້ນທະບຽນ ວິຈິດສິນລະດັບຊາດ;

8. ອະນຸຍາດ, ໂຈະ ຫຼື ຖອນ ການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ;

9. ກວດຜ່ານ ແລະ ອະນຸຍາດ ກ່ຽວກັບການກໍ່ສ້າງ ສາສະນະສະຖານ, ພຣະພຸດທະຮູບ ແລະ ອະນຸສາວະລີ ດ້ານວິຈິດສິນ;

10. ພິຈາລະນາ ການຄົ້ນຄວ້າ ແລະ ສະເໜີ ການໃຫ້ນາມມະຍົດຂອງສະມາຄົມວິຈິດສິນລາວ; ຄົ້ນຄວ້າ ແລະ ສະເໜີ ການໃຫ້ນາມມະຍົດສິລະປິນວິຈິດສິນ ຕໍ່ລັດຖະບານ;

11. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຈິດສິນ;

12. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;

13. ພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານວິຈິດສິນ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານວິຈິດສິນ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານວິຈິດສິນ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານວິຈິດສິນ;

3. ຂຶ້ນແຜນກຳນົດບຳລຸງ ແລະ ສ້າງພະນັກງານ-ລັດຖະກອນ ທີ່ເຮັດວຽກງານວິຈິດສິນ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທຳ ແລະ ວິຊາສະເພາະ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;

5. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

6. ຮັບຄຳຮ້ອງ ແລະ ພິຈາລະນາການຂຶ້ນທະບຽນ ວິຈິດສິນລະດັບທ້ອງຖິ່ນ;

7. ອະນຸຍາດ, ໂຈະ ຫຼື ຖອນ ການອະນຸຍາດດຳເນີນທຸລະກິດກ່ຽວກັບວິຈິດສິນ;

8. ກວດຜ່ານ ແລະ ອະນຸຍາດ ກ່ຽວກັບການກໍ່ສ້າງສາສະໜາສະຖານ, ພຣະພຸດທະຮູບ ແລະ ອະນຸສາວະລີ ດ້ານວິຈິດສິນ ທີ່ຕັ້ງຢູ່ພາຍໃນ ແຂວງ, ນະຄອນຫຼວງ;

9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຈິດສິນ;

10. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານວິຈິດສິນ ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;

2. ເຜີຍແຜ່, ສຶກສາອົບຮົມ, ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;

3. ຂຶ້ນແຜນບຳລຸງ ແລະ ສ້າງພະນັກງານ-ລັດຖະກອນ ທີ່ເຮັດວຽກງານວິຈິດສິນ ເພື່ອຍົກສູງຄວາມຮູ້, ຄວາມສາມາດທາງດ້ານການເມືອງ, ວັດທະນະທຳ ແລະ ວິຊາສະເພາະ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານວິຈິດສິນ;

5. ຊີ້ນຳ ການກວດກາຜົນງານ ແລະ ຜະລິດຕະພັນດ້ານວິຈິດສິນ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານວິຈິດສິນ;

7. ປະສານສົມທົບກັບ ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ສົ່ງເສີມວຽກງານວິຈິດສິນ;

8. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານວິຈິດສິນ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 ສິດ ແລະ ໜ້າທີ່ຂອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ ແລະ ພັດທະນາວຽກງານວິຈິດສິນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານວິຈິດສິນ

### ມາດຕາ 80 ອົງການກວດກາວຽກງານວິຈິດສິນ

ອົງການກວດກາວຽກງານວິຈິດສິນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານວິຈິດສິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ.

### ມາດຕາ 81 ເນື້ອໃນການກວດກາ

ການກວດກາວຽກງານວິຈິດສິນ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານວິຈິດສິນ;

2. ການສ້າງ ແລະ ການປະຕິບັດແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານວິຈິດສິນໃນແຕ່ລະໄລຍະ;

3. ລັກສະນະ, ເນື້ອໃນ ຂອງຂໍ້ມູນກ່ຽວກັບວິຈິດສິນທີ່ນຳໄປໂຄສະນາ ເຜີຍແຜ່;

4. ການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ ທີ່ຮັບຜິດຊອບວຽກງານວິຈິດສິນ;

5. ການປະກອບ ແລະ ການນຳໃຊ້ວັດຖຸປະກອນ, ພາຫະນະ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດວຽກງານວິຈິດສິນ;

6. ການແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານວິຈິດສິນ;

7. ເນື້ອໃນອື່ນທີ່ເຫັນວ່າຈຳເປັນ.

### ມາດຕາ 82 ຮູບການການກວດກາ

ຮູບການການກວດກາວຽກງານວິຈິດສິນ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຂອງອົງການບໍລິຫານ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດກາຕາມ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຄະນະກວດກາແຕ່ລະຂັ້ນ ແລະ ຄຳສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານວິຈິດສິນນັ້ນ ໃຫ້ປະຕິບັດຖືກຕ້ອງ ຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 83 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນ ວຽກງານວິຈິດສິນ ເປັນຕົ້ນ ການຄຸ້ມຄອງ, ການສົ່ງເສີມ, ການປົກປັກຮັກສາ, ການອະນຸລັກ, ການບູລະນະ ສ້ອມແປງ ແລະ ການປະຕິສັງຂອນ ວິຈິດສິນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 84 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 85 ວັນວິຈິດສິນແຫ່ງຊາດ**

ລັດ ກຳນົດເອົາ ວັນທີ 11 ພະຈິກ ຂອງທຸກປີ ເປັນວັນວິຈິດສິນແຫ່ງຊາດ.

**ມາດຕາ 86 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 87 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ




ປອ ໄຊສົມພອນ ພົມວິຫານ